# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

## ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ສາລະບານ


| | *ໜ້າ* |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 4 |
| ໃບລາຍງານຜົນການດຳເນີນງານ | 5 - 6 |
| ໃບລາຍງານຖານະການເງິນ | 7 - 9 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 10 |
| ໃບລາຍງານກະແສເງິນສົດ | 11 - 12 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 13 - 38 |

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ຂໍ້ມູນທົ່ວໄປ

**ສາຂາ**

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສປປ ລາວ. ສາຂາດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ("ທຫລ") ລົງວັນທີ 19 ກຸມພາ 2015.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2019, ທຶນຈົດທະບຽນທີ່ຖອກແລ້ວແມ່ນ 405,100,000,000 ກີບ (31 ທັນວາ 2018: 405,100,000,000 ກີບ).

ການເຄື່ອນໄຫວຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນ ຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ຜູ້ອຳນວຍການໃຫຍ່ ແລະ ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງສາຂາ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະມື້ອອກບົດລາຍງານສະບັບນີ້ ແມ່ນທ່ານ Li Zhiyong, ຜູ້ອຳນວຍການໃຫຍ່.

**ນັກກວດສອບບັນຊີ**

ນັກກວດສອບບັນຊີຂອງສາຂາແມ່ນ ບໍລິສັດ ເອີນແອນຢັງ ລາວ ຈຳກັດ.

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງສາຂາ ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019.

## ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານຂອງສາຂາ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນຂອງແຕ່ລະປີການບັນຊີ ໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງສາຂາ, ຜົນປະກອບການ ແລະ ກະແສເງິນສົດພາຍໃນປີ. ໃນການກະກຽມເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຂອງສາຂາຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ເໝາະສົມໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານແມ່ນຖືກເປີດເຜີຍ ແລະ ອະທິບາຍ ຢູ່ໃນເອກະສານລາຍງານການເງິນ;
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມຕໍ່ເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ສາຂາຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າສາຂາ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານ ຮັບປະກັນວ່າ ບັນດາຂໍ້ມູນທາງການເງິນທີ່ຖືກບັນທຶກໄວ້ນັ້ນ ໄດ້ຖືກສະແດງຢ່າງຖືກຕ້ອງຢູ່ຕະຫຼອດເວລາ ແລະ ຮັບປະກັນວ່າທຸກໆການບັນທຶກບັນຊີ ແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະບໍລິຫານຂອງສາຂາຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງສາຂາ ແລະ ດ້ວຍເຫດນັ້ນ ຕ້ອງໄດ້ປະຕິບັດຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມຂໍ້ກຳນົດທີ່ກ່າວມາຂ້າງເທິງນັ້ນ ໃນການກະກຽມເອກະສານລາຍງານການເງິນ.

## ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານມີຄວາມຍິນດີຖະແຫຼງການວ່າ ເອກະສານລາຍງານການເງິນແມ່ນໄດ້ກະກຽມຂຶ້ນໂດຍ ອີງຕາມກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ໃນນາມ ແລະ ຕາງໜ້າຂອງຄະນະບໍລິຫານ:

ທ່ານ Li Zhiyong
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2020

EY
Building a better working world

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61245636/21504443-LAS

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ຄະນະບໍລິຫານຂອງທະນາຄານແຫ່ງປະເທດຈີນ ຈໍາກັດ, ສາຂານະຄອນຫຼວງວຽງຈັນ**

ພວກຂ້າພະເຈົ້າ ໄດ້ດໍາເນີນການກວດສອບ ເອກະສານລາຍງານການເງິນຂອງທະນາຄານແຫ່ງປະເທດຈີນ ຈໍາກັດ, ສາຂານະຄອນຫຼ ("ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2019, ໃບລາຍງານຜົນການດໍາເນີນງານ, ໃບລາຍງານສ່ ປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສໍາລັບປີທີ່ສິ້ນສຸດ ວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍ ການເງິນ, ລວມທັງສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ.

ໃນຄໍາເຫັນຂອງພວກຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນຂອງສາຂາໄດ້ຖືກກະກຽມຖືກຕ້ອງຕາມຄວາມເປັນຈິງ ໂດຍສອດຄ ກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງ ການກະກຽມ ແລະ ການນໍາສະເໜີເອກະສານລາຍງານການເງິນ.

### *ພື້ນຖານການອອກຄໍາເຫັນ*

ພວກຂ້າພະເຈົ້າໄດ້ດໍາເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ. ບັນດາຄວາມຮັບຜິດຊອບຂອງພ ຂ້າພະເຈົ້າທີ່ກໍານົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບໃນ ກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາ ສອດຄ່ອງກັບກົດຈັນຍາບັນທາງບັນຊີ ສໍາລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກໍານົດທາງດ້ານ ຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະ ບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສໍາລັບນັກວິຊາຊີບບັນຊີ ຂອງສະພາມາ ຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ ພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ.

### *ບັນຫາທີ່ຄວນເອົາໃຈໃສ່ – ພື້ນຖານການບັນຊີ*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍນະໂຍບາຍການບັນຊີທີ່ ໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນໍາສະເໜີຖານະທາງການເງິນ, ຜົນການດໍາເນີນງານ ແລະ ກ ເງິນສົດຂອງສາຂາ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ຄໍາເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການເ ຕໍ່ກັບບັນຫານີ້.

### *ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານສາຂາແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການ ແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການສ້າງ ແລະ ການນໍາສ ເອກະສານລາຍງານການເງິນ ແລະ ສໍາລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ມີຄວາມຈໍາເປັນໃ ກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີ ການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາທ ຄວາມສືບເນື່ອງໃນການດໍາເນີນທຸລະກິດ, ເປີດເຜີຍບັນຫາກ່ຽວກັບຄວາມສືບເນື່ອງໃນການດໍາເນີນທຸລະກິດ, ຖ້າມີ ແລະ ນໍາໃຊ້ພື້ນຖາ ບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາ ສາມາດໃນການດໍາເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2019 ລ້ານກີບ* | *2018 ລ້ານກີບ* |
|---|---|---|---|---|
| **A** | ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ | | | |
| **1** | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | **3** | **192,192** | **140,490** |
| **2** | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ | **3** | **(39,032)** | **(24,973)** |
| **I.** | ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | | **153,160** | **115,517** |
| **3** | ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ | **4** | **18,374** | **5,610** |
| **4** | ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | **4** | **(424)** | **(273)** |
| **5** | ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ | **5** | **26,095** | **13,317** |
| **II.** | ລາຍຮັບສຸດທິຈາກການດຳເນີນງານ | | **197,205** | **134,171** |
| **B** | ລາຍຮັບ ແລະ ລາຍຈ່າຍອື່ນໆ | | | |
| **6** | ລາຍຮັບອື່ນໆຈາກການດຳເນີນງານ | **6** | **2** | **1,255** |
| **7** | ລາຍຈ່າຍບໍລິຫານ | | **(32,698)** | **(24,318)** |
| 7.1 | ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ | 7 | (25,043) | (15,981) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 8 | (7,655) | (8,337) |
| **8** | ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | **(5,143)** | **(3,033)** |
| **9** | ລາຍຈ່າຍອື່ນໆໃນການດຳເນີນງານ | **9** | **(4,002)** | **(1,075)** |
| **10** | ຫັກເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ | | - | - |

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2019 ລ້ານກີບ* | *2018 ລ້ານກີບ* |
|---|---|---|---|---|
| **III.** | **ລວມກຳໄລກ່ອນຫັກອາກອນ** | | **155,364** | **107,000** |
| **11** | **ລາຍຈ່າຍອາກອນກຳໄລ** | **22.2** | **(35,094)** | **(25,777)** |
| **IV.** | **ກຳໄລສຸທິຫຼັງຫັກອາກອນ** | | **120,270** | **81,223** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການພະແນກບໍລິຫານການເງິນ ແລະ
ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2020

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2019

| *ລຳດັບ* | *ຊັບສິນ* | *ບົດອະທິບາຍ ເລກທີ* | *31 ທັນວາ 2019 ລ້ານກີບ* | *31 ທັນວາ 2018 ລ້ານກີບ* |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກຢູ່ ທະນາຄານ ແຫ່ງ ສປປ ລາວ ("ທຫລ")** | | **1,500,647** | **961,619** |
| 1 | ເງິນສົດໃນຄັງ | 10 | 17,325 | 25,986 |
| 2 | ເງິນຝາກຢູ່ ທຫລ | 11 | 1,483,322 | 935,633 |
| **II** | **ເງິນຝາກຢູ່ທະນາຄານອື່ນ** | | **1,086,929** | **982,436** |
| 1 | ເງິນຝາກກະແສລາຍວັນ | 12.1 | 236,029 | 536,036 |
| 2 | ເງິນຝາກປະຈຳ | 12.2 | 850,900 | 446,400 |
| **III** | **ການລົງທຶນໃນຫຼັກຊັບ** | | **886,100** | **853,000** |
| 1 | ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ | 13 | 886,100 | 853,000 |
| **IV** | **ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສະເພາະ** | **14** | **886,657** | **574,656** |
| **V** | **ຊັບສິນບົດຄົງທີ່ ແລະ ສິດນຳໃຊ້ຊັບສິນ** | | **15,816** | **5,577** |
| 1 | ຊັບສິນບົດຄົງທີ່ມີຕົວຕົນ | 15.1 | 4,889 | 5,577 |
| 2 | ສິດນຳໃຊ້ຊັບສິນ | 15.2 | 10,927 | - |
| **VI** | **ຊັບສິນອື່ນໆ** | | **23,539** | **26,678** |
| 1 | ດອກເບ້ຍຄ້າງຮັບ | 16 | 21,746 | 13,304 |
| 2 | ຊັບສິນອື່ນໆ | 17 | 1,793 | 13,374 |
| | **ລວມຊັບສິນ** | | **4,399,688** | **3,403,966** |

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2019

| ລຳດັບ | ໜີ້ສິນ ແລະ ທຶນ | ບົດອະທິບາຍ ເລກທີ | 31 ທັນວາ 2019 ລ້ານກີບ | 31 ທັນວາ 2018 ລ້ານກີບ |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງໃຫ້ທະນາຄານ** | **18** | **510,049** | **224,149** |
| 1 | ເງິນຝາກກະແສລາຍວັນ | | 228,410 | 188,284 |
| 2 | ເງິນຝາກປະຈຳ | | 98,310 | 30,000 |
| 3 | ເງິນກູ້ | | 177,220 | - |
| 4 | ໜີ້ຕ້ອງສົ່ງອື່ນໆ | | 6,109 | 5,865 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **19** | **3,194,550** | **2,638,829** |
| 1 | ເງິນຝາກກະແສລາຍວັນ | | 2,230,600 | 1,753,074 |
| 2 | ເງິນຝາກປະຢັດ | | 250,669 | 193,314 |
| 3 | ເງິນຝາກປະຈຳ | | 713,281 | 692,441 |
| **III** | **ໜີ້ສິນອື່ນໆ** | | **56,694** | **24,423** |
| 1 | ດອກເບ້ຍຄ້າງຈ່າຍ | 20 | 20,871 | 10,083 |
| 2 | ໜີ້ຕ້ອງສົ່ງອາກອນ | 22.1 | 1,162 | 8,683 |
| 3 | ໜີ້ສິນອື່ນໆ | 21 | 34,661 | 5,657 |
| | **ລວມໜີ້ສິນ** | | **3,761,293** | **2,887,401** |
| **IV** | **ທຶນ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 23 | 405,100 | 405,100 |
| 2 | ຄັງສຳຮອງຕາມກົດໝາຍ | | 22,886 | 10,859 |
| 3 | ເງິນແຮທົ່ວໄປສຳລັບເງິນກູ້ທີ່ເກີດດອກອອກຜົນ | 14.2 | 4,433 | 2,873 |
| 4 | ກຳໄລສະສົມ | | 205,976 | 97,733 |
| | **ທຶນທັງໝົດ** | | **638,395** | **516,565** |
| | **ລວມໜີ້ສິນ ແລະ ທຶນ** | | **4,399,688** | **3,403,966** |

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2019

| *ລຳດັບ* | *ລາຍການນອກໃບລາຍງານຖານະການເງິນ* | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|---|
| **I** | **ຄຳໝັ້ນສັນຍາທີ່ໄດ້ໃຫ້** | | |
| **A** | **ຄຳໝັ້ນສັນຍາທາງການເງິນໄດ້ໃຫ້** | - | - |
| 1 | ຄຳໝັ້ນສັນຍາທາງການເງິນທີ່ໄດ້ໃຫ້ແກ່ລູກຄ້າ | - | - |
| **B** | **ຄຳໝັ້ນສັນຍາການຄ້ຳປະກັນທີ່ໄດ້ໃຫ້** | **2,735,689** | **2,525,781** |
| 1 | ຄຳໝັ້ນສັນຍາການຄ້ຳປະກັນໃຫ້ແກ່ລູກຄ້າ | 2,735,689 | 2,525,781 |
| | **ລວມຄຳໝັ້ນສັນຍາທີ່ໄດ້ໃຫ້** | **2,735,689** | **2,525,781** |
| **II** | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ** | **2,853,752** | **755,702** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການມັດຈຳສຳລັບເງິນກູ້ໃຫ້ແກ່ລູກຄ້າ | 2,853,752 | 755,702 |
| | **ລວມຫຼັກຊັບຄ້ຳປະກັນ ແລະ ການມັດຈຳ** | **2,853,752** | **755,702** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2020

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

| *ລາຍການ* | *ທຶນຈົດທະບຽນ ທີ່ຖອກແລ້ວ ລ້ານກີບ* | *ຄັງສຳຮອງຕາມກົດໝາຍ ລ້ານກີບ* | *ເງິນແຮທົ່ວໄປສຳລັບເງິນກູ້ ທີ່ເກີດດອກອອກຜົນ ລ້ານກີບ* | *ກຳໄລສະສົມ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2018** | **405,100** | **2,737.00** | **4,103** | **24,632** | **436,572** |
| ກຳໄລສຸດທິພາຍໃນປີ | - | - | - | 81,223 | 81,223 |
| ແບ່ງເຂົ້າຄັງແຮສຳລັບປີ 2018 | - | 8,122 | - | (8,122) | - |
| ເກັບຄືນຈາກເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | (1,253) | - | (1,253) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 23 | - | 23 |
| **ຍອດເຫຼືອນະວັນທີ 31 ມັງກອນ 2018** | **405,100** | **10,859** | **2,873** | **97,733** | **516,565** |
| ກຳໄລສຸດທິພາຍໃນປີ | - | - | - | 120,270 | 120,270 |
| ແບ່ງເຂົ້າຄັງແຮສຳລັບປີ 2019 | - | 12,027 | - | (12,027) | - |
| ເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | 1,460 | - | 1,460 |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 100 | - | 100 |
| **ຍອດເຫຼືອນະວັນທີ 31 ທັນວາ 2019** | **405,100** | **22,886** | **4,433** | **205,976** | **638,395** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ
ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2020

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ອຳນວຍການໃຫຍ່

ໃບລາຍງານກະແສເງິນສົດ
ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

| *ລາຍການ* | *ບົດອະທິບາຍ ເລກທີ* | *2019 ລ້ານກີບ* | *2018 ລ້ານກີບ* |
|---|---|---|---|
| **ກິດຈະກໍາການດໍາເນີນງານ** | | | |
| **ກໍາໄລສຸດທິກ່ອນຫັກອາກອນ** | | **155,364** | **107,000** |
| *ດັດແກ້ສໍາລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 15 | 5,143 | 3,033 |
| ລາຍຈ່າຍ/(ເກັບຄືນ) ເງິນແຮສໍາລັບໜີ້ເສຍສິນເຊື່ອ | 14.2 | 1,460 | (1,253) |
| ກໍາໄລຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈາກການຕີມູນຄ່າຄືນໃໝ່ ຂອງບັນຊີການເງິນທີ່ເປັນສະກຸນເງິນຕ່າງປະເທດ | 5 | (9,139) | - |
| ລາຍຮັບດອກເບ້ຍ | | (192,192) | (140,490) |
| ລາຍຈ່າຍດອກເບ້ຍ | | 39,032 | 24,973 |
| **ກະແສເງິນສົດເຂົ້າຈາກການດໍາເນີນງານ ກ່ອນການປ່ຽນແປງຂອງ ຊັບສິນ ແລະ ໜີ້ສິນໃນການດໍາເນີນງານ** | | **(332)** | **(6,737)** |
| (ເພີ່ມຂຶ້ນ)/ຫຼຸດລົງ ຂອງຊັບສິນໃນການດໍາເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | (1,108,380) | (626,037) |
| ເງິນກູ້ໃຫ້ລູກຄ້າ | | (312,001) | (164,351) |
| ຊັບສິນອື່ນໆ | | (25,393) | (21,495) |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນໃນການດໍາເນີນງານ | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | 108,680 | 84,419 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | | 555,721 | 660,717 |
| ເງິນກູ້ຢືມ | | 177,220 | - |
| ໜີ້ສິນອື່ນໆ | | 30,086 | (2,179) |
| ດອກເບ້ຍທີ່ໄດ້ຮັບ | | 183,750 | 134,940 |
| ດອກເບ້ຍທີ່ໄດ້ຈ່າຍ | | (28,244) | (17,043) |
| ອາກອນກໍາໄລທີ່ຊໍາລະພາຍໃນປີ | 22.2 | (43,697) | (20,288) |
| **ກະແສເງິນສົດສຸດທິຈາກກິດຈະກໍາດ້ານການດໍາເນີນງານ** | | **(462,590)** | **21,946** |
| **ກິດຈະກໍາດ້ານການລົງທຶນ** | | | |
| ການຊື້ຊັບສິນບັດຄົງທີ່ ແລະ ອຸປະກອນ | 15 | (2,269) | (1,145) |
| ການລົງທຶນໃນຫຼັກຊັບ | | - | - |
| **ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກໍາດ້ານການລົງທຶນ** | | **(2,269)** | **(1,145)** |

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019

| *ລາຍການ* | *ບົດອະທິບາຍ ເລກທີ* | *2019 ລ້ານກີບ* | *2018 ລ້ານກີບ* |
|---|---|---|---|
| *ກິດຈະກຳດ້ານການເງິນ* | | | |
| *ກະແສເງິນສົດສຸດທິຈາກກິດຈະກຳດ້ານການເງິນ* | | - | - |
| (ຫຼຸດລົງ)/ເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ | | **(464,859)** | **20,801** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ | | **1,110,353** | **1,089,552** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ | **24** | **645,494** | **1,110,353** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2020

## 1. ຂໍ້ມູນກ່ຽວກັບສາຂາ

*ການສ້າງຕັ້ງ ແລະ ການດຳເນີນງານ*

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສປປ ລາວ. ສາຂາດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ("ທຫລ") ລົງວັນທີ 19 ກຸມພາ 2015.

ການເຄື່ອນໄຫວຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

*ທຶນຈົດທະບຽນ*

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2019, ທຶນຈົດທະບຽນທີ່ຖອກແລ້ວແມ່ນ 405,100,000,000 ກີບ.

*ຜູ້ອຳນວຍການໃຫຍ່*

ຜູ້ອຳນວຍການໃຫຍ່ຂອງສາຂາ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນທ່ານ Li Zhiyong.

*ທີ່ຕັ້ງ*

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນ ຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ພະນັກງານທັງໝົດຂອງສາຂານະວັນທີ 31 ທັນວາ 2019 ມີ 52 ຄົນ (31 ທັນວາ 2018: 33 ຄົນ).

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### *2.1. ຖະແຫຼງການປະຕິບັດຕາມ*

ຄະນະບໍລິຫານຂອງສາຂາ ຂໍຢັ້ງຢືນວ່າໄດ້ກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ນຳສະເໜີເອກະສານລາຍງານການເງິນ.

### *2.2. ພື້ນຖານໃນການກະກຽມ*

ສາຂາໄດ້ບັນທຶກບັນຊີເປັນເງິນກີບລາວ ("ກີບ") ແລະ ກະກຽມເອກະສານລາຍງານການເງິນ ເປັນຫົວໜ່ວຍລ້ານກີບ ("ລ້ານກີບ") ຕາມດຳລັດ ເລກທີ 02/ນຍ ໂດຍນາຍົກລັດຖະມົນຕີແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ ແລະ ລະບຽບການອື່ນໆທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ,ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍໃນເອກະສານລາຍງານການເງິນ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ໄດ້ຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ. ສະນັ້ນ ເອກະສານລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

*ປີການບັນຊີ*

ປີການບັນຊີຂອງສາຂາທີ່ໄດ້ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

### *2.3. ການປ່ຽນແປງຂອງນະໂຍບາຍການບັນຊີ*

ນະໂຍບາຍການບັນຊີທີ່ທະນາຄານນຳໃຊ້ເພື່ອກະກຽມເອກະສານລາຍງານການເງິນເຫຼົ່ານີ້ແມ່ນມີຄວາມສອດຄ່ອງກັບເອກະສານລາຍງານການເງິນທີ່ກະກຽມສຳລັບການລາຍງານຂອງສາຂາ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018, ຍົກເວັ້ນການປ່ຽນແປງຂອງນະໂຍບາຍການບັນຊີ ແລະ ບົດອະທິບາຍຊ້ອນທ້າຍທີ່ກ່ຽວກັບການດຳເນີນງານດັ່ງຕໍ່ໄປນີ້:

#### *2.3.1 ສັນຍາເຊົ່າ*

ໃນປີ 2019, ນະໂຍບາຍການບັນຊີຂອງສາຂາກ່ຽວກັບສັນຍາເຊົ່າໄດ້ມີການປ່ຽນແປງຕາມການແຈ້ງການ ສະບັບເລກທີ່. 1433/ທຫລ ເຊິ່ງລົງວັນທີ 24 ຕຸລາ 2019 ເພື່ອຮຽກຮ້ອງໃຫ້ບັນດາທະນາຄານທຸລະກິດໃຫ້ປະຕິບັດຕາມ ມາດຕະຖານ IFRS 16 ໃນການກະກຽມ ແລະ ລາຍງານເອກະສານລາຍງານການເງິນ.

IFRS 16 ແມ່ນໄດ້ອອກລະບຽບຫຼັກການ ໃນການຮັບຮູ້, ການວັດແທກ, ການນຳສະເໜີ ແລະ ເປີດເຜີຍການເຊົ່າ ແລະ ກຳນົດໃຫ້ຜູ້ເຊົ່າຮັບຮູ້ການເຊົ່າ ເກືອບທຸກໆລາຍການໃນໃບລາຍງານຖານະການເງິນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.3. *ການປ່ຽນແປງໂດຍນະໂຍບາຍການບັນຊີ* (ຕໍ່)

#### 2.3.1 *ສັນຍາເຊົ່າ* (ຕໍ່)

ສາຂາໄດ້ນຳໃຊ້ IFRS 16 ໂດຍນຳໃຊ້ວິທີການປ່ຽນແປງຄືນຫຼັງ ເຊິ່ງວັນທີໃນການນຳໃຊ້ເບື້ອງຕົ້ນແມ່ນວັນທີ 1 ມັງກອນ 2019. ພາຍໃຕ້ວິທີການດັ່ງກ່າວນີ້, ມາດຕະຖານແມ່ນໄດ້ຖືກປະຕິບັດແບບມີຜົນຍ້ອນຫຼັງ ເຊິ່ງມີຜົນກະທົບສະສົມຈາກການນຳໃຊ້ມາດຕະຖານຄັ້ງທຳອິດ ທີ່ຮັບຮູ້ນະມື້ທີ່ນຳໃຊ້ມາດຕະຖານໃນເບື້ອງຕົ້ນ. ທາງສາຂາໄດ້ເລືອກນຳໃຊ້ການຫັນປ່ຽນທີ່ສະດວກເໝາະສົມ ເຊິ່ງອະນຸຍາດໃຫ້ມາດຕະຖານດັ່ງກ່າວ ຖືກນຳໃຊ້ສະເພາະກັບສັນຍາທີ່ເປັນສັນຍາເຊົ່າທີ່ຖືກນຳໃຊ້ນະໂຍບາຍການບັນຊີທີ່ຜ່ານມາ ນະວັນທີຂອງປະຕິບັດໃນເບື້ອງຕົ້ນ. ພ້ອມກັນນັ້ນທາງສາຂາ ກໍ່ຍັງໄດ້ເລືອກນຳໃຊ້ຂໍ້ຍົກເວັ້ນຂອງການຮັບຮູ້ສັນຍາການເຊົ່າທີ່, ຈາກມື້ເລີ່ມຕົ້ນ, ມີໄລຍະການເຊົ່າ 12 ເດືອນ ຫຼື ໜ້ອຍກວ່າ ແລະ ບໍ່ມີທາງເລືອກຂອງການຊື້ (ການເຊົ່າໄລຍະສັ້ນ), ແລະ ບັນດາສັນຍາການເຊົ່າຊັບສິນທີ່ມີມູນຄ່າຕໍ່າ (ຊັບສິນທີ່ມີມູນຄ່າຕໍ່າ).

ສາຂາມີສັນຍາການເຊົ່າຊັບສິນສຳລັບອາຄານສຳນັກງານ. ກ່ອນທີ່ການນຳໃຊ້ມາດຕະຖານ IFRS 16, ສາຂາໄດ້ຈັດປະເພດສັນຍາການເຊົ່າຂອງຕົນເປັນລາຍຈ່າຍລ່ວງໜ້າ. ພາຍຫຼັງການຮັບຮອງເອົາການນຳໃຊ້ມາດຕະຖານ IFRS 16, ທາງສາຂາໄດ້ນຳໃຊ້ວິທີການຮັບຮູ້ ແລະ ການວັດແທກແບບດຽວສຳລັບການເຊົ່າທັງໝົດ, ຍົກເວັ້ນການເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕໍ່າ.

ສາຂາໄດ້ຮັບຮູ້ສິດນຳໃຊ້ຊັບສິນ ແລະ ໜີ້ສິນການເຊົ່າສຳລັບສັນຍາເຊົ່າທີ່ຜ່ານມາຖືກຈັດປະເພດເປັນການເຊົ່າທາງການເງິນ ຫຼື ການເຊົ່າເພື່ອການດຳເນີນງານ, ຍົກເວັ້ນ ການເຊົ່າໄລຍະສັ້ນ ແລະ ການເຊົ່າບັນດາຊັບສິນທີ່ມີມູນຄ່າຕໍ່າ. ບັນດາສິດນຳໃຊ້ຊັບສິນຂອງສັນຍາເຊົ່າສ່ວນໃຫຍ່ ແມ່ນຈະຖືກຮັບຮູ້ໂດຍອີງຕາມມູນຄ່າຍົກຍອດມາ ໃຫ້ຄືກັບວ່າມາດຕະຖານໄດ້ຖືກປະຕິບັດຢູ່ຕະຫຼອດເວລາ, ນອກເໜືອຈາກການນຳໃຊ້ອັດຕາການກູ້ຢືມທີ່ເພີ່ມຂຶ້ນໃນວັນທີທີ່ປະຕິບັດໃນເບື້ອງຕົ້ນ. ໃນບາງສັນຍາເຊົ່າ, ສິດນຳໃຊ້ຊັບສິນຖືກຮັບຮູ້ໃນມູນຄ່າທີ່ເທົ່າກັນກັບໜີ້ສິນການເຊົ່າ, ດັດປັບສຳລັບການຊຳລະລ່ວງໜ້າ ແລະ ຄ້າງຈ່າຍທີ່ກ່ຽວຂ້ອງທີ່ຮັບຮູ້ຜ່ານມາ. ໜີ້ສິນການເຊົ່າ ແມ່ນຖືກຮັບຮູ້ໂດຍອີງໃສ່ມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າທີ່ຍັງເຫຼືອ, ໂດຍນຳໃຊ້ສ່ວນຫຼຸດຈາກອັດຕາການກູ້ຢືມທີ່ເພີ່ມຂຶ້ນໃນວັນທີທີ່ເລີ່ມຕົ້ນໃນການປະຕິບັດ.

ສາຂາຍັງໄດ້ນຳໃຊ້ການປະຕິບັດທີ່ສະດວກເໝາະສົມ ເຊິ່ງໃນນັ້ນປະກອບດ້ວຍ:

- ນຳໃຊ້ອັດຕາຫຼຸດດຽວກັບຄັ້ງສັນຍາເຊົ່າທີ່ມີລັກສະນະຄ້າຍຄືກັນຢ່າງສົມເຫດສົມຜົນ;
- ອີງໃສ່ການປະເມີນວ່າການເຊົ່າແມ່ນມີຜົນທັນທີກ່ອນວັນທີການປະຕິບັດໃນເບື້ອງຕົ້ນ;
- ປະຕິບັດການນຳໃຊ້ຂໍ້ຍົກເວັ້ນຕໍ່ກັບການເຊົ່າໄລຍະສັ້ນ ທີ່ໄລຍະສັນຍາສິ້ນສຸດພາຍໃນ 12 ເດືອນນັບແຕ່ມື້ເລີ່ມຕົ້ນຂອງການນຳໃຊ້ເປັນຕົ້ນໄປ;
- ບໍ່ລວມຄ່າໃຊ້ຈ່າຍໂດຍກົງເບື້ອງຕົ້ນ ຈາກການວັດແທກຂອງສິດນຳໃຊ້ຊັບສິນໃນວັນທີທີ່ປະຕິບັດໃນເບື້ອງຕົ້ນ.
- ນຳໃຊ້ປະສົບການຄວາມເຂົ້າໃຈໃນການກຳນົດໄລຍະການເຊົ່າ ທີ່ສັນຍາເຊົ່າປະກອບມີທາງເລືອກໃນການສືບຕໍ່ ຫຼື ຍົກເລີກສັນຍາເຊົ່າ.

#### 2.3.2 *ເງິນແຮສຳລັບເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຄວນເອົາໃຈໃສ່*

ອີງຕາມໜັງສືທາງການເລກທີ 334/AFD ອອກໂດຍຜູ້ວ່າການທະນາຄານແຫ່ງ ສປປ ລາວ ລົງວັນທີ 11 ມີນາ 2019, ຕໍ່ກັບການລາຍງານເງິນແຮສຳລັບເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຄວນເອົາໃຈໃສ່ ແມ່ນຖືກລາຍງານເປັນເງິນແຮພິເສດທີ່ຫັກລົບກັບ "ເງິນກູ້ແກ່ລູກຄ້າ" ແທນທີ່ "ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ" ທີ່ສະແດງໃນທຶນຂອງເຈົ້າຂອງໃນໃບລາຍງານຖານະການເງິນຂອງສາຂາ (ດັ່ງທີ່ເປີດເຜີຍໃນບົດອະທິບາຍເລກທີ 2.8).

ເນື່ອງຈາກສາຂາບໍ່ມີເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຄວນເອົາໃຈໃສ່ນະວັນທີ 31 ທັນວາ 2018 ແລະ ນະວັນທີ 31 ທັນວາ 2019. ດັ່ງນັ້ນ, ການປ່ຽນແປງນະໂຍບາຍນີ້ຈຶ່ງບໍ່ມີຜົນກະທົບຕໍ່ກັບເອກະສານລາຍງານການເງິນຂອງສາຂາ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.4. *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນຖືກຮັບຮູ້ຢູ່ໃນໃບລາຍງານຜົນການດຳເນີນງານ ຕາມພື້ນຖານຫຼັກການຄ້າງຮັບຄ້າງຈ່າຍ ໂດຍນຳໃຊ້ວິທີການຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍແມ່ນໄດ້ຖືກກຳນົດໄວ້ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກຢຸດີກໍ່ຕໍ່ເມື່ອເງິນກູ້ຖືກຈັດຊັ້ນເປັນໜີ້ທີ່ບໍ່ເກີດດອກອອກຜົນ (ບົດອະທິບາຍເລກທີ 2.8 ສຳລັບຄວາມໝາຍຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫຼື ເມື່ອຜູ້ບໍລິຫານເຊື່ອວ່າ ຜູ້ກູ້ຢືມແມ່ນບໍ່ມີຄວາມສາມາດຊຳລະຄືນດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍກ່ຽວກັບເງິນກູ້ດັ່ງກ່າວ ແມ່ນໄດ້ຖືກບັນທຶກລົງໃນໃບລາຍງານຜົນການດຳເນີນງານເມື່ອໄດ້ຮັບເງິນຕົວຈິງ.

### 2.5. *ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ*

ຄ່າທຳນຽມ ແລະ ຄ່າບໍລິການປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການບໍລິການໂອນເງິນ (ລວມມີການຊຳລະການຄ້າ), ຄ່າທຳນຽມທີ່ເກີດຈາກການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທຳນຽມທີ່ເກີດຂຶ້ນຈາກທຸລະກິດເງິນກູ້.

ຄ່າທຳນຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານບົນພື້ນຖານຫລັກການເງິນສົດ.

### 2.6. *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕໍ່າກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕໍ່າກວ່າ ຫຼື ເທົ່າກັບ 30 ວັນ.

### 2.7. *ເງິນກູ້ໃຫ້ລູກຄ້າ*

ເງິນກູ້ໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດຄ້າງຊຳລະລົບໃຫ້ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນໃນທ້າຍປີ.

### 2.8. *ການຈັດຊັ້ນ ແລະ ເງິນແຮຂອງກິດຈະກຳສິນເຊື່ອ*

*ການຈັດຊັ້ນໜີ້*

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ ("BOL512") ລົງວັນທີ 29 ມິຖຸນາ 2018 ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ ("OL898") ລົງວັນທີ 14 ພະຈິກ 2018 ສາຂາໄດ້ຈັດຊັ້ນເງິນກູ້ເປັນ 5 ກຸ່ມ ໂດຍອີງຕາມປະຫວັດການຄ້າງຈ່າຍ ແລະ ປັດໄຈເຊີງຄຸນະພາບອື່ນໆເງິນກູ້ ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ບໍ່ຖືຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນ ເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ໜີ້ຕ້ອງທວງຍາກ (NPL)

*ເງິນແຮ*

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ, ສາຂາສ້າງເງິນແຮ ໂດຍອີງຕາມການຈັດຊັ້ນໜີ້ຂອງແຕ່ລະກຸ່ມດັ່ງຕໍ່ໄປນີ້:

**2.** **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

***2.8.*** ***ການຈັດຊັ້ນ ແລະ ເງິນແຮຂອງກິດຈະກຳສິນເຊື່ອ*** (ຕໍ່)

| *ກຸ່ມ* | *ອັດຕາເງິນແຮ* | *ປະເພດເງິນແຮ (i)* | *ການບັນຊີສຳລັບຍອດເຫຼືອເງິນແຮ (ii)* | *ການບັນຊີສຳລັບ ສ່ວນປ່ຽນແປງໃນຍອດເຫຼືອເງິນແຮ (iii)* |
|---|---|---|---|---|
| *ເງິນກູ້ທີ່ເກີດດອກອອກຜົນ* | | | | |
| A | 0.5% | ເງິນແຮທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບອື່ນ |
| B | 3.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ລາຍຈ່າຍ/ລາຍຮັບອື່ນ |
| *ເງິນກູ້ທີ່ບໍ່ເກີດດອກອອກຜົນ* | | | | |
| C | 20.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| D | 50.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| E | 100.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |

(i). ຈຳນວນເງິນແຮແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ດັ່ງລຸ່ມນີ້:

(ກ) ເງິນແຮທົ່ວໄປ = ອັດຕາເງິນແຮ x ຍອດເງິນກູ້ທີ່ຍັງເຫຼືອ

(ຂ) ເງິນແຮສະເພາະ = ອັດຕາເງິນແຮ x ຍອດເງິນກູ້ທີ່ຍັງເຫຼືອ

*ສາຂາສາມາດເລືອກທີ່ຈະບໍ່ລວມເອົາມູນຄ່າຫຼັກຊັບຄໍ້າປະກັນເຂົ້າໃນສູດຄິດໄລ່ເງິນແຮ ດັ່ງທີ່ໄດ້ອະນຸຍາດໄວ້ໃນ ຂໍ້ຕົກລົງ ເລກທີ 512/ທຫລ ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ.*

(ii). ຍອດເຫຼືອເງິນແຮຂອງ *ເງິນກູ້ທີ່ເກີດດອກອອກຜົນທີ່ຈັດຊັ້ນໃນກຸ່ມ A* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ "ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ" ພາຍໃຕ້ທຶນ ແລະ ຄັງສຳຮອງຂອງສາຂາ.

ຍອດເຫຼືອສະສົມຂອງເງິນແຮຂອງ *ເງິນກູ້ທີ່ບໍ່ເກີດດອກອອກຜົນ ແລະ ເງິນກູ້ທີ່ເກີດດອກອອກຜົນທີ່ຈັດຊັ້ນໃນກຸ່ມ B* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ "ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສຳລັບໜີ້ຕ້ອງຮັບທວງຍາກ".

(iii). ສ່ວນປ່ຽນແປງສຳລັບເງິນແຮຂອງ *ເງິນກູ້ທີ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນແຮ ແລະ "ລາຍຮັບຈາກການດຳເນີນງານອື່ນໆ" ສຳລັບການເກັບຄືນລາຍຈ່າຍເງິນແຮ.

ສ່ວນປ່ຽນແປງສຳລັບເງິນແຮຂອງ *ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍ (ເກັບຄືນ)/ເງິນແຮສຸດທິສຳລັບໜີ້ຕ້ອງຮັບທວງຍາກ".

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

***2.9. ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ***

ຫຼັກຊັບການລົງທຶນທີ່ຖືໄວ້ຈົນຄົບກຳນົດ ແມ່ນຫຼັກຊັບທີ່ຄົງທີ່ ຫຼື ການຊຳລະຄືນສາມາດກຳນົດໄດ້ ແລະ ມີມື້ຄົບກຳນົດທີ່ແນ່ນອນ ເຊິ່ງສາຂາມີຈຸດປະສົງ ຫຼື ສາມາດຖືໄວ້ຈົນຄົບກຳນົດເພື່ອຮັບດອກເບ້ຍ. ເມື່ອພາກສ່ວນໃຫຍ່ຂອງຫຼັກຊັບຖືກຂາຍກ່ອນວັນຄົບກຳນົດ, ຫຼັກຊັບເຫຼົ່ານີ້ຈະຖືກຈັດປະເພດຄືນໃໝ່ ເປັນຫຼັກຊັບເພື່ອການຄ້າ ຫຼື ຫຼັກຊັບທີ່ພ້ອມສຳລັບການຂາຍ.

ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດແມ່ນຖືກຮັບຮູ້ເລີ່ມຕົ້ນຈາກຕົ້ນທຶນ ແລະ ຈະຖືກນຳສະເໜີຕາມຕົ້ນທຶນໃນໄລຍະຕໍ່ມາ. ຄ່າບໍລິການເພີ່ມເຕີມ ແລະ ສ່ວນຫຼຸດ ຈາກການຊື້ຫຼັກຊັບແມ່ນຈະຖືກຄິດໄລ່ໃນໃບລາຍງານຜົນການດຳເນີນງານ ໂດຍການນຳໃຊ້ວິທີການຄິດໄລ່ແບບເສັ້ນຊື່ຕະຫຼອດປີ ນັບຈາກວັນທີທີ່ໄດ້ຮັບມາຈົນເຖິງວັນຄົບກຳນົດ.

ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດແມ່ນຈະຕ້ອງມີການທົບທວນສຳລັບຂໍ້ບົກພ່ອງເປັນແຕ່ລະໄລຍະ. ເງິນແຮສຳລັບຫຼັກຊັບທີ່ມີຂໍ້ບົກພ່ອງແມ່ນຈະຖືກສ້າງຂຶ້ນເມື່ອມີການຫຼຸດລົງຢ່າງມີໃນສຳຄັນ ຫຼື ເປັນເວລາດົນຂອງມູນຄ່າຍຸດຕິທຳທີ່ຕ່ຳກວ່າຕົ້ນທຶນ. ເຊິ່ງເງິນແຮດັ່ງກ່າວຈະຖືກຮັບຮູ້ໃນນາມຂອງ "ກຳໄລ/(ຂາດທຶນ) ສຸດທິຈາກຫຼັກຊັບການລົງທຶນ" ໃນໃບລາຍງານຜົນການດຳເນີນງານ.

***2.10. ຊັບສົມບັດຄົງທີ່***

ຊັບສົມບັດຄົງທີ່ ລວມມີ ຊັບສົມບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ. ຊັບສົມບັດຄົງທີ່ທີ່ມີຕົວຕົນປະກອບມີ ການຕົບແຕ່ງປັບປຸງອາຄານ, ເຄື່ອງເຟີນິເຈີ ແລະ ເຄື່ອງຕິດຕັ້ງ, ຄອມພິວເຕີ ແລະ ພາຫະນະ. ຊັບສົມບັດຄົງທີ່ບໍ່ມີຕົວຕົນປະກອບມີ ລາຍຈ່າຍກ່ອນການສ້າງຕັ້ງວິສາຫະກິດ.

ຊັບສົມບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບດ້ວຍມູນຄ່າຊື້ບວກກັບຄ່າໃຊ້ຈ່າຍທີ່ຕິດພັນໃນການເຮັດໃຫ້ຊັບສົມບັດຄົງທີ່ສາມາດນຳໃຊ້ໄດ້.

ບັນດາລາຍຈ່າຍສຳລັບການຊື້ເພີ່ມ, ລາຍຈ່າຍການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືກຕີເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສົມບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມຈະຖືກລະສາງຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນທີ່ມາຈາກການຂາຍອອກຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

***2.11 ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ***

ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສົມບັດຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບເສັ້ນຊື່ ໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ທີ່ຄາດຄະເນຂອງຊັບສົມບັດເຫຼົ່ານັ້ນ ໂດຍອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015, ອອກໂດຍປະທານສະພາແຫ່ງຊາດ ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 24 ພຶດສະພາ 2016. ອັດຕາໃຊ້ການຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າປະຈຳປີ ມີດັ່ງນີ້:

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.11 *ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ* (ຕໍ່)

*ຊັບສິນບັດຄົງທີ່ມີຕົວຕົນ:*

| | |
|---|---|
| ອາຄານ ແລະ ການປັບປຸງອາຄານ | 5% |
| ເຟີນີເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ອຸປະກອນ ຄອມພິວເຕີ | 20% |
| ພາຫະນະ | 20% |

*ຊັບສິນບັດຄົງທີ່ບໍ່ມີຕົວຕົນ:*

| | |
|---|---|
| ລາຍຈ່າຍກ່ອນການສ້າງຕັ້ງວິສາຫະກິດ | 50% |

### 2.12. *ຄັງສະສົມຕາມລະບຽບການ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍ ທະນາຄານທຸລະກິດ ລົງວັນທີ 7 ທັນວາ 2018, ບັນດາທະນາຄານທຸລະກິດຕ້ອງໄດ້ແບ່ງຜົນກຳໄລສຸດທິເພື່ອນຳໄປສ້າງຄັງສຳຮອງຕາມລະບຽບການ ດັ່ງລຸ່ມນີ້:

- ຄັງສະສົມຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມມາດຕາທີ 156 ໃນກົດໝາຍວິສາຫະກິດ ລົງວັນທີ 26 ທັນວາ 2013, ທະນາຄານສຳນັກງານໃຫຍ່ນຕ້ອງໃດ້ຈັດສັນ 10% ຂອງກຳໄລຫຼັງອາກອນຂອງແຕ່ລະປີເຂົ້າຄັງສຳຮອງຕາມກົດໝາຍ. ເມື່ອຄັງດັ່ງກ່າວມີມູນຄ່າເຖິງ 50% ຂອງທຶນຈົດທະບຽນ, ທະນາຄານອາດຢຸດການສຳຮອງເງິນແຮຄັງກ່າວ, ເວັ້ນເສຍແຕ່ກົດໝາຍຈະກຳນົດໃວ້ເປັນຢ່າງອື່ນ

ກອງທຶນເພື່ອຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆຕ້ອງໄດ້ຮັບການສ້າງຂຶ້ນຕາມການພິຈາລະນາຂອງຄະນະຜູ້ບໍລິຫານ.

ດັ່ງນັ້ນ, ທະນາຄານໃດ້ສ້າງຄັງສຳຮອງສຳລັບປີ 2019 ດັ່ງນີ້:

| *ຄັງສຳຮອງ* | *% ຂອງກຳໄລຫຼັງອາກອນ (ຫັກລົບກັບຂາດທຶນສະສົມ, ຖ້າມີ)* |
|---|---:|
| ຄັງແຮຕາມລະບຽບການ | 10.00% |
| ຄັງຂະຫຍາຍທຸລະກິດ | 0.00% |

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

***2.13. ການເຊົ່າ (ນະໂຍບາຍທີ່ນຳໃຊ້ຫຼັງຈາກວັນທີ 1 ມັງກອນ 2019)***

*2.13.1 ສິດການນຳໃຊ້ຊັບສິນ*

ນະມື້ເລີ່ມສັນຍາ, ສາຂາປະເມີນວ່າສັນຍານັ້ນແມ່ນ, ຫຼື ປະກອບມີ, ການຕົກລົງການເຊົ່າ ອີງຕາມວ່າສັນຍານັ້ນໄດ້ມອບສິດໃນການຄວບຄຸມການນຳໃຊ້ຊັບສິນ ໃນໄລຍະເວລາໃດໜຶ່ງໃຫ້ແກ່ຜູ້ໃຊ້ (ຜູ້ເຊົ່າ) ເພື່ອພິຈາລະນາຫຼືບໍ່. ຖ້າຫາກສັນຍາປະກອບມີຫຼາຍກວ່າໜຶ່ງສ່ວນປະກອບຂອງການເຊົ່າ, ຫຼື ການລວມຂອງທຸລະກຳການເຊົ່າ ແລະ ການບໍລິການ, ການພິຈາລະນາຈະຖືກແບ່ງໃຫ້ແກ່ແຕ່ລະສ່ວນປະກອບຂອງການເຊົ່າ ແລະ ທີ່ບໍ່ແມ່ນການເຊົ່າ ໃນການສະຫຼຸບ ແລະ ໃນການຕີມູນຄ່າຄືນໃໝ່ໃນຄັ້ງຕໍ່ໄປຂອງສັນຍາ ບົນພື້ນຖານຂອງລາຄາຂາຍພຽງຢ່າງດຽວ. ສາຂາຈະລວມສ່ວນປະກອບຂອງການເຊົ່າ ແລະ ທີ່ບໍ່ແມ່ນການເຊົ່າ ໃນກໍລະນີທີ່ບໍ່ສາມາດແຍກສ່ວນປະກອບທີ່ບໍ່ແມ່ນການເຊົ່າອອກໄດ້.

ສາຂາຮັບຮູ້ສິດການນຳໃຊ້ຊັບສິນນະວັນທີເລີ່ມຕົ້ນຂອງການເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນພ້ອມນຳໃຊ້). ສິດການນຳໃຊ້ຊັບສິນຖືກວັດແທກໂດຍຕົ້ນທຶນ, ລົບການຂາດທຶນສະສົມຈາກຄ່າຫຼູ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ, ແລະ ດັດແກ້ສຳລັບການຕີມູນຄ່າຄືນໃໝ່ສຳລັບໜີ້ສິນການເຊົ່າ. ຕົ້ນທຶນຂອງສິດການນຳໃຊ້ຊັບສິນປະກອບດ້ວຍມູນຄ່າຂອງໜີ້ສິນການເຊົ່າ ດັດແກ້ສຳລັບການຈ່າຍທີ່ເກີດຂຶ້ນນະ ຫຼື ກ່ອນມື້ເລີ່ມຕົ້ນ, ບວກໃຫ້ຕົ້ນທຶນທາງກົງເບື້ອງຕົ້ນທີ່ເກີດຂຶ້ນ ແລະ ຕົ້ນທຶນຄາດຄະເນຈາກການຮື້ຖອນ ແລະ ຍ້າຍຊັບສິນດັ່ງກ່າວ ຫຼື ເຮັດໃຫ້ຊັບສິນ ຫຼື ສະຖານທີ່ທີ່ຊັບສິນຕັ້ງຢູ່ກັບສູ່ສະພາບເດີມ, ລົບກັບສິ່ງຈູງໃຈທີ່ໄດ້ຮັບ. ໄລຍະເວລາຂອງການເຊົ່າປະກອບດ້ວຍໄລຍະເວລາທີ່ຄວບຄຸມທາງເລືອກທີ່ຈະຕໍ່ເວລາ ຖ້າຫາກແນ່ໃຈວ່າຈະນຳໃຊ້ທາງເລືອກຂອງການຕໍ່ສັນຍາ. ເວັ້ນເສຍແຕ່ວ່າສາຂາແນ່ໃຈວ່າຈະໄດ້ຮັບກຳມະສິດຂອງຊັບສິນໃນການເຊົ່າ ນະມື້ທີ່ໄລຍະການເຊົ່າສິ້ນສຸດລົງ, ການຮັບຮູ້ສິດການນຳໃຊ້ຊັບສິນຖືກຫັກຄ່າຫຼູ້ຍຫ້ຽນຕາມວິທີເສັ້ນຊື່ໃນເວລາທີ່ສັ້ນກວ່າອາຍຸການນຳໃຊ້ທີ່ຄາດຄະເນໄວ້. ສິດການນຳໃຊ້ຊັບສິນອາດມີການປະເມີນຄ່າເຊື່ອມ.

*2.13.2 ໜີ້ສິນການເຊົ່າ*

ນະວັນທີເລີ່ມຕົ້ນຂອງການເຊົ່າ, ສາຂາຮັບຮູ້ໜີ້ສິນການເຊົ່າທີ່ຖືກວັດແທກຕາມມູນຄ່າປະຈຸບັນຂອງການຈ່າຍຄ່າເຊົ່າທີ່ຕ້ອງຈ່າຍໃນໄລຍະເວລາການເຊົ່າ. ການຈ່າຍຄ່າເຊົ່າປະກອບດ້ວຍລາຍຈ່າຍຄົງທີ່ (ປະກອບມີ ການຈ່າຍທີ່ມີເນື້ອໃນຄົງທີ່) ລົບໃຫ້ສິ່ງຈູງໃຈຈາກການເຊົ່າທີ່ຈະໄດ້ຮັບ, ຄ່າເຊົ່າຜັນແປທີ່ຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ຈຳນວນທີ່ຄາດວ່າຈະຕ້ອງຈ່າຍພາຍໃຕ້ການຮັບປະກັນມູນຄ່າທີ່ຍັງເຫຼືອ. ການຈ່າຍຄ່າເຊົ່າຍັງປະກອບດ້ວຍລາຄາທີ່ໃຊ້ໃນທາງເລືອກໃນການຊື້ທີ່ມີຄວາມແນ່ນອນຢ່າງສົມເຫດສົມຜົນໂດຍທະນາຄານ ແລະ ການຈ່າຍຄ່າປັບໃໝສຳລັບການຍົກເລີກສັນຍາເຊົ່າ, ຖ້າຫາກໄລຍະເວລາການເຊົ່າບົ່ງບອກວ່າທະນາຄານຈະໃຊ້ສິດທາງເລືອກໃນການຍົກເລີກສັນຍາ. ຄ່າໃຊ້ຈ່າຍຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາແມ່ນຖືກຮັບຮູ້ເປັນລາຍຈ່າຍໃນຊ່ວງເວລາທີ່ເຫດການ ຫຼື ມີເງື່ອນໄຂທີ່ເຮັດໃຫ້ມີການລາຍຈ່າຍເກີດຂຶ້ນ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງລາຍການຈ່າຍຄ່າເຊົ່າ, ສາຂານຳໃຊ້ອັດຕາດອກເບ້ຍເງິນກູ້ສ່ວນເພີ່ມນະວັນທີເລີ່ມຕົ້ນ ຖ້າຫາກອັດຕາດອກເບ້ຍໃນສັນຍາເຊົ່າບໍ່ສາມາດກຳນົດໄດ້. ຫຼັງຈາກມື້ເລີ່ມຕົ້ນ, ຈຳນວນຂອງໜີ້ສິນການເຊົ່າເພີ່ມຂຶ້ນເພື່ອສະແດງໃຫ້ເຫັນເຖິງການເພີ່ມຂຶ້ນຂອງອັດຕາດອກເບ້ຍ ແລະ ການຫຼຸດລົງຂອງການຈ່າຍທີ່ໄດ້ເກີດຂຶ້ນແລ້ວ. ນອກຈາກນັ້ນ, ມູນຄ່າຍົກຍອດມາຂອງໜີ້ສິນການເຊົ່າ ແມ່ນຖືກວັດແທກຄືນໃໝ່ ຖ້າຫາກມີການດັດແກ້, ປ່ຽນແປງໄລຍະການເຊົ່າ, ປ່ຽນແປງການຈ່າຍທີ່ມີເນື້ອໃນຄົງທີ່ ຫຼື ການປ່ຽນແປງໃນການປະເມີນເພື່ອທີ່ຈະຊື້ຊັບສິນດັ່ງກ່າວ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### **2.13. *ການເຊົ່າ (ນະໂຍບາຍທີ່ນຳໃຊ້ຫຼັງຈາກວັນທີ 1 ມັງກອນ 2019)*** (ຕໍ່)

#### *2.13.3 ການເຊົ່າໄລຍະສັ້ນ ແລະ ການເຊົ່າທີ່ມີມູນຄ່າຕ່ຳ*

ສາຂານຳໃຊ້ການຍົກເວັ້ນການຮັບຮູ້ການເຊົ່າໄລຍະສັ້ນ ສຳລັບການເຊົ່າໄລຍະສັ້ນທີ່ມີໄລຍະການເຊົ່າ 12 ເດືອນ ຫຼື ໜ້ອຍກວ່າ ຈາກມື້ເລີ່ມຕົ້ນ ແລະ ບໍ່ລວມມີທາງເລືອກໃນການຊື້. ມັນຍັງຖືກໃຊ້ໃນການຍົກເວັ້ນການຮັບຮູ້ການເຊົ່າທີ່ມີມູນຄ່າຕໍ່າຕໍ່ກັບ ຊັບສິນທີ່ຖືກພິຈາລະນາວ່າມີມູນຄ່າຕ່ຳ. ການຈ່າຍຄ່າເຊົ່າຂອງການເຊົ່າໄລຍະສັ້ນ ແລະ ການເຊົ່າທີ່ມີມູນຄ່າຕໍ່າຖືກຮັບຮູ້ເປັນ ລາຍຈ່າຍໂດຍໃຊ້ວິທີເສັ້ນຊື່ຕາມໄລຍະການເຊົ່າ.

#### *2.13.4 ການຕັດສິນໃຈທີ່ສຳຄັນໃນການກຳນົດໄລຍະເວລາຂອງການເຊົ່າ ແລະ ທາງເລືອກໃນການຕໍ່ອາຍຸ*

ທະນາຄານກຳນົດໄລຍະເວລາຂອງການເຊົ່າເປັນ ໄລຍະການເຊົ່າທີ່ບໍ່ສາມາດຍົກເລີກ, ພ້ອມກັບໄລຍະເວລາລວມເອົາທາງ ເລືອກທີ່ຈະຕໍ່ອາຍຸ ຖ້າຫາກມີຄວາມແນ່ນອນຢ່າງມີເຫດຜົນວ່າຈະຖືກນຳໃຊ້, ຫຼື ໄລຍະເວລາຕ່າງໆທີ່ລວມເອົາທາງເລືອກທີ່ ຈະຍົກເລີກສັນຍາ, ຖ້າຫາກມີຄວາມແນ່ນອນຢ່າງມີເຫດຜົນວ່າຈະບໍ່ນຳໃຊ້.

ທະນາຄານນຳໃຊ້ການຕັດສິນໃຈໃນການປະເມີນວ່າມັນມີຄວາມແນ່ນອນຢ່າງມີເຫດຜົນວ່າຈະນຳໃຊ້ທາງເລືອກໃນການຕໍ່ ອາຍຸ ຫຼື ບໍ່. ເຊິ່ງມັນພິຈາລະນາທຸກໆປັດໃຈທີ່ກ່ຽວຂ້ອງທີ່ສ້າງຄວາມຈູງໃຈທາງເສດຖະກິດໃນການນຳໃຊ້ທາງເລືອກໃນການ ຕໍ່ອາຍຸ. ຫຼັງຈາກມື້ເລີ່ມຕົ້ນ, ທະນາຄານປະເມີນຄືນໃໝ່ໄລຍະຂອງການເຊົ່າ ຖ້າຫາກມີເຫດການທີ່ສຳຄັນ ຫຼື ການປ່ຽນແປງ ຂອງສະຖານະການທີ່ຢູ່ພາຍໃນການຄວບຄຸມ ແລະ ກະທົບກັບຄວາມສາມາດໃນການນຳໃຊ້ (ຫຼື ບໍ່ນຳໃຊ້) ທາງເລືອກໃນການ ຕໍ່ອາຍຸ (ຕົວຢ່າງ, ການປ່ຽນຍຸດທະສາດທຸລະກິດ). ທະນາຄານລວມເອົາໄລຍະການຕໍ່ອາຍຸເປັນສ່ວນໜຶ່ງຂອງໄລຍະການເຊົ່າ ສຳລັບການເຊົ່າທີ່ເປັນສະຖານທີ່ ແລະ ອຸປະກອນໄອທີ ເນື່ອງຈາກຄວາມສຳຄັນຂອງຊັບສິນເຫຼົ່ານີ້ຕໍ່ກັບການດຳເນີນງານ.

### **2.14. *ການເຊົ່າ (ນະໂຍບາຍທີ່ນຳໃຊ້ກ່ອນວັນທີ 1 ມັງກອນ 2019)***

ການພິຈາລະນາວ່າຂໍ້ຕົກລົງເປັນການເຊົ່າ, ຫຼື ປະກອບມີການເຊົ່າ, ແມ່ນອີງຕາມເນື້ອໃນຂອງຂໍ້ຕົກລົງ ແລະ ຂໍ້ກຳນົດຂອງການ ປະເມີນວ່າ ການປະຕິບັດຕາມສັນຍາແມ່ນຂຶ້ນກັບການນຳໃຊ້ຂອງຊັບສິນສະເພາະ ຫຼື ຊັບສິນ ແລະ ຂໍ້ຕົກລົງທີ່ມອບສິດນຳໃຊ້ ຊັບສິນ

*ສາຂາໃນຖານະເປັນຜູ້ເຊົ່າ*

ບັນດາການເຊົ່າ, ທີ່ຄວາມສ່ຽງ ແລະ ຜົນປະໂຫຍດຂອງເຈົ້າຂອງຊັບສິນທີ່ໃຫ້ເຊົ່າ ແມ່ນບໍ່ຖືກໂອນຢ່າງສຳຄັນໄປໃຫ້ສາຂາ ແມ່ນການເຊົ່າເພື່ອການດຳເນີນງານ. ການຈ່າຍຄ່າເຊົ່າເພື່ອການດຳເນີນງານຖືກຮັບຮູ້ເປັນລາຍຈ່າຍໃນກຳໄລ ຫຼື ຂາດທຶນ ໂດຍ ວິທີເສັ້ນຊື່ຕາມໄລຍະເວລາຂອງການເຊົ່າ. ຂໍ້ຜູກພັນຄ່າເຊົ່າຄ້າງຈ່າຍແມ່ນຖືກຮັບຮູ້ເປັນລາຍຈ່າຍໃນຊ່ວງໄລຍະທີ່ມັນເກີດ ຂຶ້ນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.15. *ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ*

ສາຂາໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ. ລາຍຮັບ ແລະ ລາຍຈ່າຍທີ່ເກີດເປັນສະກຸນເງິນຕາຕ່າງປະເທດພາຍໃນປີ ແມ່ນຖືກຕີມູນຄ່າເປັນສະກຸນເງິນກີບຕາມອັດຕາແລກປ່ຽນນະມື້ທີ່ເກີດມີການເຄື່ອນໄຫວທຸລະກຳ. ຊັບສິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດໃນທ້າຍປີ ແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນ ໃນມື້ສ້າງໃບລາຍງານຖານະການເງິນ. ສ່ວນຜິດດ່ຽງເງິນຕາຕ່າງປະເທດທີ່ເກີດຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນໃນໃບລາຍງານຖານະການເງິນ ແມ່ນຖືກຮັບຮູ້ຢູ່ໃນໃບລາຍງານຜົນການດຳເນີນງານ. ລາຍການອັດຕາແລກປ່ຽນຂອງສະກຸນເງິນຕາຕ່າງປະເທດໃນວັນທີ 31 ທັນວາ 2019 ແລະ 2018 ແມ່ນມີດັ່ງລຸ່ມນີ້:

| | *31 ທັນວາ 2019* | *31 ທັນວາ 2018* |
|---|---:|---:|
| | *ກີບ* | *ກີບ* |
| ໂດລາສະຫະລັດ ("USD") | 8,861 | 8,530 |
| ບາດ ("THB") | 296.26 | 261.90 |
| ຢວນ ("CNY") | 1,270 | 1,240 |

### 2.16. *ອາກອນ*

ສາຂາມີພັນທະຈ່າຍອາກອນໃນອັດຕາ 24% ຂອງກຳໄລກ່ອນຫັກອາກອນໃນທ້າຍປີ 31 ທັນວາ 2019 ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 24 ພຶດສະພາ 2016. ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາຈາກກົມສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ລະບຽບການດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

### 2.17. *ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຫລັງອອກການ*

ຜົນປະໂຫຍດຫລັງອອກການຈະຖືກຈ່າຍໃຫ້ພະນັກງານສາຂາຜູ້ທີ່ບຳນານ ໂດຍພະແນກກອງທຶນສະຫວັດດີການສັງຄົມເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫລັງອອກການຂອງພະນັກງານ ໂດຍການຈ່າຍເງິນເຂົ້າປະກັນສັງຄົມໃນອັດຕາ 6% ຂອງເງິນເດືອນພື້ນຖານຂອງພະນັກງານທຸກໆເດືອນ ແຕ່ບໍ່ເກີນ 270,000 ກີບຕໍ່ພະນັກງານໜຶ່ງຄົນ ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບພະນັກງານຫລັງອອກການ.

*ຜົນປະໂຫຍດຈາກການຢຸດຈ້າງງານ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ສາຂາມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີສາຂາ ພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງອີງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.17. *ຜົນປະໂຫຍດຂອງພະນັກງານ* (ຕໍ່)

ສຳລັບຜົນປະໂຫຍດຂອງພະນັກງານທີ່ເກີດຈາກສອງກໍລະນີທີ່ໄດ້ກ່າວມາຂ້າງເທິງນັ້ນ, ສາຂາຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານ ໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນສຸດທ້າຍຄູນໂດຍຈຳນວນເດືອນທີ່ໄດ້ເຮັດວຽກ. ນະວັນທີ 31 ທັນວາ 2019, ບໍ່ມີພະນັກງານສາຂາຖືກໄລ່ອອກຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນຂອງສາຂາ.

## 3. ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

| | *2019* *ລ້ານກີບ* | *2018* *ລ້ານກີບ* |
|---|---|---|
| **ລາຍຮັບຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກ:** | | |
| ທະນາຄານອື່ນ | 70,580 | 37,098 |
| ເງິນກູ້ໃຫ້ລູກຄ້າ | 61,695 | 47,233 |
| ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ | 59,917 | 56,159 |
| | **192,192** | **140,490** |
| **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນສຳລັບ:** | | |
| ທະນາຄານອື່ນ | (11,242) | (2,869) |
| ເງິນຝາກລູກຄ້າ | (27,790) | (22,104) |
| | **(39,032)** | **(24,973)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **153,160** | **115,517** |

## 4. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

| | *2019* *ລ້ານກີບ* | *2018* *ລ້ານກີບ* |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:** | | |
| ຄ່າບໍລິການຊຳລະສະສາງ | 5,301 | 3,369 |
| ຄ່າບໍລິການທາງການເງິນ | 9,648 | 1,204 |
| ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ | 3,425 | 1,037 |
| | **18,374** | **5,610** |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:** | | |
| ຄ່າທຳນຽມບໍລິການຊຳລະສະສາງ | (277) | (236) |
| ຄ່າທຳນຽມຊຳລະສະສາງໃຫ້ທະນາຄານກາງ | (40) | (6) |
| ຄ່າສະມາຊິກ | (107) | (31) |
| | **(424)** | **(273)** |
| **ກຳໄລສຸດທິຈາກລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | **17,950** | **5,337** |

## 5. ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

| | 2019<br>*ລ້ານກີບ* | 2018<br>*ລ້ານກີບ* |
|---|---|---|
| ກຳໄລຈາກສ່ວນຕ່າງການຊື້ຂາຍເງິນຕາຕ່າງປະເທດ | 16,956 | 10,168 |
| ກຳໄລຈາກສ່ວນຕ່າງການຕີມູນຄ່າຂອງລາຍການທາງການເງິນ | 9,139 | 3,149 |
| | **26,095** | **13,317** |

## 6. ລາຍຮັບອື່ນໆຈາກການດຳເນີນງານ

| | 2019<br>*ລ້ານກີບ* | 2018<br>*ລ້ານກີບ* |
|---|---|---|
| ການເກັບຄືນເງິນແຮທີ່ວໄປສຳລັບເງິນກູ້ທີ່ເກີດດອກອອກຜົນ *(ບົດອະທິບາຍເລກທີ 14.2)* | - | 1,253 |
| ອື່ນໆ | 2 | 2 |
| | **2** | **1,255** |

## 7. ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ

| | 2019<br>*ລ້ານກີບ* | 2018<br>*ລ້ານກີບ* |
|---|---|---|
| ຄ່າແຮງງານ ແລະ ເງິນອຸດໜູນ | 23,754 | 14,699 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 1,289 | 1,282 |
| | **25,043** | **15,981** |

## 8. ລາຍຈ່າຍບໍລິຫານອື່ນໆ

| | 2019<br>*ລ້ານກີບ* | 2018<br>*ລ້ານກີບ* |
|---|---|---|
| ຄ່າເຊົ່າຫ້ອງການ | - | 2,185 |
| ຄ່າບໍລິການພາຍນອກ | 557 | 338 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 603 | 410 |
| ໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 281 | 165 |
| ຄ່າໂທລະຄົມມະນາຄົມ | 930 | 1,120 |
| ຄ່າຝຶກອົບຮົມ, ປະຊຸມ ແລະ ສຳມະນາ | 1,558 | 1,912 |
| ຄ່ານ້ຳ ແລະ ຄ່າໄຟຟ້າ | 1,020 | 909 |
| ອື່ນໆ | 2,706 | 1,298 |
| | **7,655** | **8,337** |

**9. ລາຍຈ່າຍອື່ນໆໃນການດຳເນີນງານ**

| | *2019*<br>*ລ້ານກີບ* | *2018*<br>*ລ້ານກີບ* |
|---|---|---|
| ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ *(ບົດອະທິບາຍເລກທີ 14.2)* | 1,460 | - |
| ຄ່າໃຊ້ຈ່າຍປະກັນໄພໃຫ້ກອງທຶນປົກປ້ອງຜູ້ຝາກເງິນ | 1,082 | 1,022 |
| ຄ່າໃຊ້ອື່ນໆ | 1,460 | 53 |
| | **4,002** | **1,075** |

**10. ເງິນສົດໃນຄັງ**

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| ເງິນສົດໃນຄັງທີ່ເປັນເງິນກີບ | 6,739 | 8,384 |
| ເງິນສົດໃນຄັງທີ່ເປັນເງິນຕາຕ່າງປະເທດ | 10,586 | 17,602 |
| | **17,325** | **25,986** |

**11. ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ ("ທຫລ")**

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| ເງິນຝາກກະແສລາຍວັນ | 392,140 | 326,331 |
| ເງິນຝາກມີກຳນົດ(i) | 886,100 | 426,500 |
| ເງິນຝາກພາກບັງຄັບ(ii) | 205,077 | 182,797 |
| ເງິນຝາກຄ້ຳປະກັນທຶນຈົດທະບຽນ(iii) | 5 | 5 |
| | **1,483,322** | **935,633** |

(i) ເງິນຝາກຢູ່ ທຫລ ແມ່ນມີໄລຍະເວລາກຳໜົດ 3 ປີ ແລະ 5 ປີ ແລະ ມີອັດຕາດອກເບ້ຍ 3.00% + ອັດຕາດອກເບ້ຍແບບລອຍຕົວ 6 ເດືອນຕໍ່ປີ ແລະ 4.30% + ອັດຕາດອກເບ້ຍແບບລອຍຕົວ 6 ເດືອນຕໍ່ປີ ຕາມລຳດັບ.

(ii) ຕາມຂໍ້ກຳນົດຂອງ ທຫລ, ສາຂາຕ້ອງໄດ້ຮັກສາຄັງແຮເງິນສົດໄວ້ກັບ ທຫລ ໃນຮູບແບບເງິນຝາກພາກບັງຄັບ ເຊິ່ງຖືກຄິດໄລ່ ໃນອັດຕາ 5% ສຳລັບເງິນກີບ ແລະ 10% ສຳລັບສະກຸນເງິນຕາຕ່າງປະເທດ, ເດືອນໜຶ່ງສອງຄັ້ງ, (2018: 5% ແລະ 10%) ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕໍ່າກວ່າ 12 ເດືອນ. ພາຍໃນປີ, ສາຂາໄດ້ຮັກສາເງິນຝາກພາກບັງຄັບ ເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດຂອງ ທຫລ.

## 11. ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ ("ທຫລ") (ຕໍ່)

(iii) ອີງຕາມດຳລັດເລກທີ 02/ນຍ ຂອງ ທຫລ, ສາຂາຂອງທະນາຄານຕ່າງປະເທດແມ່ນຖືກກຳນົດໃຫ້ຮັກສາເງິນຝາກພິເສດໄວ້ກັບ ທຫລ ເທົ່າກັບ 25% ຂອງທຶນຈົດທະບຽນທີ່ຖອກແລ້ວ ເພື່ອຮັບປະກັນຄວາມສືບເນື່ອງໃນການດຳເນີນງານ. ສາຂາຖືກອະນຸຍາດໂດຍ ທຫລ ໂດຍໜັງສືທາງການເລກທີ 194/ກຄທ ລົງວັນທີ 18 ພຶດສະພາ 2015, ເລກທີ 239/ກຄທ ລົງວັນທີ 18 ມິຖຸນາ 2015 ແລະ 334/ກຄທ ລົງວັນທີ 19 ສິງຫາ 2016 ໃຫ້ຖອນເງິນຈາກບັນຊີເງິນຝາກເພື່ອເປັນທຶນໃນການດຳເນີນງານ. ນະວັນທີ 31 ທັນວາ 2019, ຍອດເຫຼືອເງິນຝາກພິເສດຂອງສາຂາມີ 5 ລ້ານກີບ.

ເງິນຝາກຢູ່ ທຫລ ມີເງິນຝາກກະແສລາຍວັນ, ເງິນຝາກພາກບັງຄັບ ແລະ ເງິນຝາກຄ້ຳປະກັນທຶນຈົດທະບຽນ. ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

## 12. ເງິນຝາກຢູ່ກັບທະນາຄານອື່ນ

### *12.1 ເງິນຝາກກະແສລາຍວັນ*

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນກັບທະນາຄານພາຍໃນປະເທດ** | | |
| ທະນາຄານ ອຸດສະຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງ | 10,244 | 10,474 |
| **ເງິນກະແສລາຍວັນກັບທະນາຄານຕ່າງປະເທດ** | | |
| ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດດິ້ງ | 42,045 | 114,484 |
| ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | 83,578 | 20,418 |
| ທະນາຄານແຫ່ງປະເທດຈີນ (ໄທ) ຈຳກັດ ມະຫາຊົນ | 8,266 | 2,220 |
| ທະນາຄານແຫ່ງປະເທດຈີນ, ສາຂາແຟັງເຟີດ | 792 | - |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 91,041 | 225,132 |
| ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | - | 163,245 |
| ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ | 63 | 63 |
| | **236,029** | **536,036** |

### *12.2 ເງິນຝາກປະຈຳ*

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| **ເງິນຝາກປະຈຳກັບທະນາຄານຕ່າງປະເທດ** | | |
| ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດດິ້ງ | 850,900 | 446,400 |
| | **850,900** | **446,400** |

## 12. ເງິນຝາກຢູ່ກັບທະນາຄານອື່ນ (ຕໍ່)

### 12.2 *ເງິນຝາກປະຈໍາ* (ຕໍ່)

ເງິນຝາກປະຈໍາຢູ່ທະນາຄານແຫ່ງປະເທດຈີນ, ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດດິ້ງ ມີກໍານົດ 3 ເດືອນ ຫຼື ຕໍ່າກວ່າ ແລະ ມີອັດຕາດອກເບ້ຍ 2.08% - 3.13% ຕໍ່ປີ.

## 13. ຫຼັກຊັບປະເພດຖືໄວ້ຈົນຄົບກໍານົດ

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| ພັນທະບັດອອກໂດຍ ທຫລ | 886,100 | 853,000 |
| | **886,100** | **853,000** |

ພັນທະບັດອອກໂດຍ ທຫລ ນະວັນທີ 31 ທັນວາ 2019 ລວມມີ:

| *ໄລຍະ ເວລາ* | *ວັນທີຊື້* | *ວັນທີຄົບກໍານົດ* | *ມູນຄ່າຕາມໜ້າບັດ ໂດລາ* | *ທຽບເທົ່າເງິນກີບ ລ້ານກີບ* | *ອັດຕາດອກເບ້ຍ % ຕໍ່ປີ* |
|---|---|---|---|---|---|
| 5 ປີ | 21-ຕຸລາ-15 | 21-ຕຸລາ-20 | 50,000,000 | 443,050 | 4.30% + ອັດຕາ ດອກເບ້ຍແບບລອຍ ຕົວ 6 ເດືອນ |
| 5 ປີ | 16-ມິຖຸນາ-17 | 16-ມິຖຸນາ-22 | 50,000,000 | 443,050 | 4.30% + ອັດຕາ ດອກເບ້ຍແບບລອຍ ຕົວ 6 ເດືອນ |
| | | | **100,000,000** | **886,100** | |

## 14. ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສໍາລັບເງິນກູ້ທີ່ບໍ່ເກີດດອກອອກຜົນ

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| ເງິນກູ້ໃຫ້ລູກຄ້າ *(ບົດອະທິບາຍເລກທີ 14.1)* | 886,657 | 574,656 |
| *ເງິນກູ້ໃຫ້ແກ່ທະນາຄານສໍານັກງານໃຫຍ່ (ບົດອະທິບາຍເລກທີ 25)* | *177,800* | *-* |
| *ເງິນກູ້ໃຫ້ແກ່ບໍລິສັດ ແລະ ບຸກຄົນ* | *708,857* | *574,656* |
| ລົບ ເງິນແຮສໍາລັບເງິນກູ້ບໍ່ເກີດດອກອອກຜົນ | - | - |
| | **886,657** | **574,656** |

ເງິນກູ້ໃຫ້ແກ່ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈໍາກັດ ມີກໍານົດ 3 ເດືອນ ຫຼື ຕໍ່າກວ່າ ແລະ ມີອັດຕາດອກເບ້ຍ 2.80% ເຖິງ 3.10% ຕໍ່ປີ.

## 14. ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ (ຕໍ່)

ອັດຕາດອກເບ້ຍສຳລັບການປ່ອຍເງິນກູ້ໃຫ້ແກ່ລູກຄ້າພາຍໃນປີແມ່ນມີດັ່ງລຸ່ມນີ້:

| | *2019<br>ອັດຕາດອກເບ້ຍ<br>% ຕໍ່ປີ* | *2018<br>ອັດຕາດອກເບ້ຍ<br>% ຕໍ່ປີ* |
|---|---|---|
| ເງິນກູ້ທີ່ເປັນສະກຸນເງິນກີບ | 8.00% -11.00% | 8.00 - 11.00% |
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 4.50% - 8.54% | 6.95 - 9.03% |
| ເງິນກູ້ທີ່ເປັນສະກຸນເງິນຢວນ | 2.80% - 6.50% | 5.50 - 6.50% |

### *14.1 ການວິເຄາະຂອງເງິນກູ້ໃຫ້ລູກຄ້າ*

*ການວິເຄາະຕາມສະກຸນເງິນ*

| | *31 ທັນວາ 2019<br>ລ້ານກີບ* | *31 ທັນວາ 2018<br>ລ້ານກີບ* |
|---|---|---|
| ເງິນກູ້ສະກຸນເງິນກີບ | 332,755 | 355,500 |
| ເງິນກູ້ສະກຸນເງິນໂດລາ | 348,162 | 81,888 |
| ເງິນກູ້ສະກຸນເງິນຢວນ | 205,740 | 137,268 |
| | **886,657** | **574,656** |

*ວິເຄາະຕາມສະຖານະເງິນກູ້*

| | *31 ທັນວາ 2019<br>ລ້ານກີບ* | *31 ທັນວາ 2018<br>ລ້ານກີບ* |
|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | 886,657 | 574,656 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | - | - |
| | **886,657** | **574,656** |

*ວິເຄາະຕາມມື້ຄົບກຳນົດ*

| | *31 ທັນວາ 2019<br>ລ້ານກີບ* | *31 ທັນວາ 2018<br>ລ້ານກີບ* |
|---|---|---|
| ເງິນກູ້ໄລຍະສັ້ນ | 198,117 | 142,230 |
| ເງິນກູ້ໄລຍະກາງ | 380,915 | 132,426 |
| ເງິນກູ້ໄລຍະຍາວ | 307,625 | 300,000 |
| | **886,657** | **574,656** |

## 14. ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ (ຕໍ່)

### *14.1 ການວິເຄາະຂອງເງິນກູ້ໃຫ້ລູກຄ້າ* (ຕໍ່)

*ວິເຄາະຕາມພາກສ່ວນເສດຖະກິດ*

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| ບໍລິສັດ ອຸດສາຫະກຳ | 360,695 | 365,588 |
| ບໍລິສັດ ກໍ່ສ້າງ | 265,830 | 145,870 |
| ບໍລິສັດ ກະສິກຳ | 53,166 | 51,180 |
| ບໍລິສັດ ການຄ້າ | 5,317 | 12,018 |
| ອຸດສາຫະກຳການທະນາຄານ | 177,800 | - |
| ອື່ນໆ | 23,849 | - |
| | **886,657** | **574,656** |

### *14.2 ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ*

ການເຄື່ອນໄຫວຂອງເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນຂອງສາຂາ ພາຍໃນປີ ມີດັ່ງນີ້:

| | *2019*<br>*ລ້ານກີບ* | *2018*<br>*ລ້ານກີບ* |
|---|---|---|
| **ນະວັນທີ 1 ມັງກອນ 2019** | **2,873** | **4,103** |
| ເງິນແຮ ແລະ ເກັບຄືນເງິນແຮພາຍໃນປີ | 1,460 | (1,253) |
| ສ່ວນຜິດດ່ຽງເງິນຕາຕ່າງປະເທດ | 100 | 23 |
| **ນະວັນທີ 31 ທັນວາ 2019** | **4,433** | **2,873** |

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ການຫັກເງິນແຮຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ ນະວັນທີ 31 ທັນວາ 2019 ມີດັ່ງລຸ່ມນີ້:

| *ການຈັດຊັ້ນໜີ້* | *ຍອດເຫຼືອເງິນກູ້*<br>*ລ້ານກີບ* | *ເງິນແຮທົ່ວໄປ*<br>*ລ້ານກີບ* | *ເງິນແຮທັງໝົດ*<br>*ລ້ານກີບ* |
|---|---|---|---|
| ໜີ້ປົກກະຕິ | 886,657 | 4,433 | 4,433 |
| ໜີ້ຄວນເອົາໃຈໃສ່ | - | - | - |
| ໜີ້ຕໍ່າກວ່າມາດຕະຖານ | - | - | - |
| ໜີ້ສົງໄສ | - | - | - |
| ໜີ້ສູນ | - | - | - |
| ລວມ | **886,657** | **4,433** | **4,433** |

## 15. ຊັບສິນບັດຄົງທີ່

### *15.1 ຊັບສິນຄົງທີ່ມີຕົວຕົນ*

| | *ອາຄານ ແລະ ການປັບປຸງ ລ້ານກີບ* | *ເຟີນີເຈີ ແລະ ເຄື່ອງກົນແຕ່ງ ລ້ານກີບ* | *ຄອມພິວເຕີ ລ້ານກີບ* | *ພາຫະນະ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2019 | 7,448 | 2,754 | 5,892 | 1,607 | 17,701 |
| ຊື້ເພີ່ມ | - | 41 | 952 | 1,276 | 2,269 |
| ນະວັນທີ 31 ທັນວາ 2019 | 7,448 | 2,795 | 6,844 | 2,883 | 19,970 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2019 | 5,586 | 1,999 | 3,739 | 800 | 12,124 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 745 | 551 | 1,255 | 406 | 2,957 |
| ນະວັນທີ 31 ທັນວາ 2019 | 6,331 | 2,550 | 4,994 | 1,206 | 15,081 |
| **ມູນຄ່າສຸດທິ:** | | | | | |
| ນະວັນທີ 31 ມັງກອນ 2019 | 1,862 | 755 | 2,153 | 807 | 5,577 |
| ນະວັນທີ 31 ທັນວາ 2019 | 1,117 | 245 | 1,850 | 1,677 | 4,889 |

### *15.1 ສິດນໍາໃຊ້ຊັບສິນ*

| | *ອາຄານ* |
|---|---|
| **ຕົ້ນທຶນ:** | |
| ນະວັນທີ 1 ມັງກອນ 2019 | 13,113 |
| ຊື້ເພີ່ມ | - |
| ນະວັນທີ 31 ທັນວາ 2019 | 13,113 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | |
| ນະວັນທີ 1 ມັງກອນ 2019 | - |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 2,186 |
| ນະວັນທີ 31 ທັນວາ 2019 | 2,186 |
| **ມູນຄ່າສຸດທິ:** | |
| ນະວັນທີ 1 ມັງກອນ 2019 | 13,113 |
| ນະວັນທີ 31 ທັນວາ 2019 | 10,927 |

## 16. ດອກເບ້ຍຄ້າງຮັບ

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| **ດອກເບ້ຍຄ້າງຮັບຈາກ:** | | |
| ເງິນຝາກຢູ່ທະນາຄານອື່ນ | 12,743 | 4,344 |
| ເງິນກູ້ໃຫ້ລູກຄ້າ | 2,276 | 1,617 |
| ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ | 6,727 | 7,343 |
| | **21,746** | **13,304** |

## 17. ຊັບສິນອື່ນໆ

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| ລາຍຈ່າຍລ່ວງໜ້າ | 168 | 13,263 |
| ອື່ນໆ | 1,625 | 111 |
| | **1,793** | **13,374** |

## 18. ໜີ້ຕ້ອງສົ່ງໃຫ້ທະນາຄານ

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| ເງິນຝາກກະແສລາຍວັນຈາກທະນາຄານອື່ນພາຍໃນປະເທດ | | |
| ທະນາຄານ ເອເອັນແຊັດ (ລາວ) ຈຳກັດ | 176,790 | 166,617 |
| ທະນາຄານ ແຄນາເດຍ ລາວ ຈຳກັດ | 589 | - |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 15,402 | 2,064 |
| ທະນາຄານລາວຈີນ | 35,629 | 19,603 |
| ເງິນຝາກປະຈຳຈາກທະນາຄານອື່ນພາຍໃນປະເທດ | | |
| ທະນາຄານ ເອເອັນແຊັດ (ລາວ) ຈຳກັດ | 50,000 | - |
| ທະນາຄານ ແຄນາເດຍ ລາວ ຈຳກັດ | 48,310 | 30,000 |
| ກູ້ຢືມຈາກສະຖາບັນການເງິນ | | |
| ທະນາຄານແຫ່ງປະເທດຈີນ (ຮົງກົງ) (ບົດອະທິບາຍເລກທີ 25) | 177,220 | - |
| ໜີ້ຕ້ອງສົ່ງໃຫ້ແກ່ສະຖາບັນການເງິນອື່ນໆ | 6,109 | 5,865 |
| | **510,049** | **224,149** |

## 18. ໜີ້ຕ້ອງສົ່ງໃຫ້ທະນາຄານ (ຕໍ່)

ເງິນຝາກປະຈຳຈາກທະນາຄານ ເຄານາເດຍ (ລາວ) ຈຳກັດ ມີກຳນົດເວລາ 6 ເດືອນ ແລະ ມີອັດຕາດອກເບ້ຍ 2.00% - 3.95% ຕໍ່ປີ.

ເງິນຝາກປະຈຳຈາກທະນາຄານ ເອເອັນແຊັດ (ລາວ) ຈຳກັດ ມີກຳນົດເວລາ 3 ເດືອນ ແລະ ມີອັດຕາດອກເບ້ຍ 3.00% ຕໍ່ປີ.

ເງິນກູ້ຢືມຈາກທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ມີກຳນົດເວລາ 1 ເດືອນ ແລະ ມີອັດຕາດອກເບ້ຍ 2.00% ຕໍ່ປີ.

## 19. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນ** | **2,230,600** | **1,753,074** |
| - ເປັນເງິນກີບ | 147,335 | 101,163 |
| - ເປັນເງິນຕາຕ່າງປະເທດ | 2,083,265 | 1,651,911 |
| **ເງິນຝາກປະຫຍັດ** | **250,669** | **193,314** |
| - ເປັນເງິນກີບ | 10,309 | 17,115 |
| - ເປັນເງິນຕາຕ່າງປະເທດ | 240,360 | 176,199 |
| **ເງິນຝາກປະຈຳ** | **713,281** | **692,441** |
| - ເປັນເງິນກີບ | 6,621 | 4,522 |
| - ເປັນເງິນຕາຕ່າງປະເທດ | 706,660 | 687,919 |
| | **3,194,550** | **2,638,829** |

ອັດຕາດອກເບ້ຍຂອງໜີ້ຕ້ອງສົ່ງໃຫ້ລູກຄ້າມີດັ່ງນີ້:

| | *2019*<br>*ອັດຕາດອກເບ້ຍ* | *2018*<br>*ອັດຕາດອກເບ້ຍ* |
|---|---|---|
| ເງິນຝາກກະແສລາຍວັນເປັນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດເປັນກີບ | 1.10% | 1.00% |
| ເງິນຝາກປະຢັດເປັນໂດລາ | 1.25% | 1.25% |
| ເງິນຝາກປະຢັດເປັນບາດ | 0.50% | 0.50% |
| ເງິນຝາກປະຢັດເປັນຢວນ | 0.90% | 0.20% |
| ເງິນຝາກປະຈຳເປັນກີບ | 3.00% - 6.25% | 3.00% - 9.00% |
| ເງິນຝາກປະຈຳເປັນໂດລາ | 1.7% - 6.75% | 2.00% - 6.75% |
| ເງິນຝາກປະຈຳເປັນບາດ | 0.9% - 4.5% | 0.75% - 4.50% |
| ເງິນຝາກປະຢັດເປັນຢວນ | 0.4% - 2.2% | 0.25% - 0.40% |

**20. ດອກເບ້ຍຄ້າງຈ່າຍ**

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| **ດອກເບ້ຍຄ້າງຈ່າຍໃຫ້:** | | |
| ທະນາຄານອື່ນໆ | 945 | 377 |
| ລູກຄ້າ | 19,926 | 9,706 |
| | **20,871** | **10,083** |

**21. ໜີ້ສິນອື່ນໆ**

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| ໜີ້ຕ້ອງສົ່ງໃຫ້ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 24,708 | 950 |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 9,528 | 4,457 |
| ໜີ້ສິນອື່ນໆ | 425 | 250 |
| | **34,661** | **5,657** |

**22. ໜີ້ຕ້ອງສົ່ງອາກອນ**

***22.1 ໜີ້ຕ້ອງສົ່ງອາກອນ***

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| ອາກອນກຳໄລທີ່ຕ້ອງມອບ | (49) | 8,554 |
| ອາກອນເງິນເດືອນທີ່ຕ້ອງມອບ | 189 | 129 |
| ອື່ນໆ | 1,022 | - |
| | **1,162** | **8,683** |

## 22. ໜີ້ຕ້ອງສົ່ງອາກອນ (ຕໍ່)

### 22.2 *ອາກອນກຳໄລ ("ອກລ")*

ສາຂາໄດ້ຫັກເງິນແຮໄວ້ສຳລັບອາກອນກຳໄລພາຍໃນປີ ອີງຕາມກົດໝາຍອາກອນຂອງ ສປປ ລາວ. ສາຂາມີພັນທະຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລທັງໝົດກ່ອນເສຍອາກອນ ສຳລັບທ້າຍປີ 31 ທັນວາ 2019 ອີງຕາມກົດໝາຍອາກອນເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ວັນທີ 24 ພຶດສະພາ 2016.

| | *2019*<br>*ລ້ານກີບ* | *2018*<br>*ລ້ານກີບ* |
|---|---:|---:|
| ກຳໄລກ່ອນອາກອນ | 155,364 | 107,000 |
| ລາຍຈ່າຍທີ່ບໍ່ຕ້ອງຫັກອາກອນ | (9,139) | - |
| ຄ່າລາຍຈ່າຍທີ່ບໍ່ໃຫ້ຖືເປັນລາຍຈ່າຍສຳລັບການຄິດໄລ່ອາກອນ | - | 269 |
| ປຽບທຽບອາກອນທີ່ເກີດຈາກຄວາມແຕກຕ່າງລະຫວ່າງການປະຕິບັດທາງການບັນຊີ ແລະ ກົດໝາຍສ່ວຍສາອາກອນ | - | 135 |
| **ລາຍຮັບສຳລັບຫັກອາກອນ** | **146,225** | **107,404** |
| **ລາຍຈ່າຍອາກອນກຳໄລ, ຕາມອັດຕາກົດໝາຍ 24%** | **35,094** | **25,777** |
| ອາກອນກຳໄລຄ້າງຊຳລະຕົ້ນປີ | 8,554 | 3,065 |
| ອາກອນກຳໄລທີ່ຊຳລະພາຍໃນປີ | (43,697) | (20,288) |
| **ອາກອນກຳໄລ (ເກັບຄືນ)/ຄ້າງຈ່າຍທ້າຍປີ** | **(49)** | **8,554** |

ລາຍການເສຍອາກອນຂອງສາຂາຂຶ້ນຢູ່ກັບການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມີໄລ່ລຽງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 23. ທຶນຈົດທະບຽນທີ່ຖອກແລ້ວ

| | *2019*<br>*ລ້ານກີບ* | *2018*<br>*ລ້ານກີບ* |
|---|---:|---:|
| ຍອດຍົກມາ | 405,100 | 405,100 |
| ທຶນຈົດທະບຽນຖອກເພີ່ມພາຍໃນປີ | - | - |
| **ຍອດເຫຼືອທ້າຍ** | **405,100** | **405,100** |

## 24. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31 ທັນວາ 2019*<br>*ລ້ານກີບ* | *31 ທັນວາ 2018*<br>*ລ້ານກີບ* |
|---|---|---|
| ເງິນສົດໃນຄັງ | 17,325 | 25,986 |
| ເງິນຝາກກະແສລາຍວັນກັບ ທຫລ | 392,140 | 326,331 |
| ເງິນຝາກກະແສລາຍວັນກັບທະນາຄານອື່ນ | 236,029 | 536,036 |
| ເງິນຝາກປະຈຳກັບທະນາຄານອື່ນທີ່ມີມື້ຄົບກຳນົດເດີມ 30 ຫຼື ໜ້ອຍກວ່າ | - | 222,000 |
| | **645,494** | **1,110,353** |

## 25. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ, ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ:

- ມີການຄວບຄຸມ(ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມທົ່ວໄປກັບສາຂາ (ໃນນີ້ລວມມີທະນາຄານສຳນັກງານໃຫຍ່, ສາຂາ ແລະ ສາຂາຍ່ອຍ);
- ມີຜົນປະໂຫຍດນຳກັນກັບສາຂາເຊິ່ງສົ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(ຂ) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳສາຂາ;

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງຜູ້ບໍລິຫານຫຼັກຂອງສາຂາ ຫຼື ທະນາຄານສຳນັກງານໃຫຍ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ກ່ຽວຂ້ອງ ກໍ່ແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ອິດທິພົນອັນໃຫຍ່ ຫຼວງ, ຫຼື ມີສິດທິອຳນາດການໃນການອອກສຽງສ່ວນໃຫຍ່ຕໍ່ ທະນາຄານທີ່ດຳເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆ ພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງສາຂາ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

**25. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)**

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ທຸລະກຳ* | *31 ທັນວາ 2019 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* | *31 ທັນວາ 2018 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* |
|---|---|---|---|---|
| ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | ທະນາຄານສຳນັກງານໃຫຍ່ | ເງິນຝາກກະແສລາຍວັນ | 83,578 | 20,418 |
| | | ກູ້ຢືມ | (177,220) | - |
| | | ດອກເບ້ຍຄ້າງຈ່າຍ | (292) | - |
| | | ເງິນໃຫ້ກູ້ຢືມ | 177,800 | - |
| | | ດອກເບ້ຍຄ້າງຮັບ | 330 | - |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 91,041 | 225,132 |
| | | ໜີ້ຕ້ອງສົ່ງອື່ນໆ | (24,708) | (950) |
| | | ເງິນຝາກປະຈຳ | - | - |
| | | ດອກເບ້ຍຄ້າງຮັບ | - | - |
| ທະນາຄານແຫ່ງປະເທດຈີນ, ໜ່ວຍຊຽງໄຮ ອາເອັມບີ ເທຣດດິ້ງ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 42,045 | 114,484 |
| | | ເງິນຝາກປະຈຳ | 850,900 | 446,400 |
| | | ດອກເບ້ຍຄ້າງຮັບ | 2,851 | 609 |
| ທະນາຄານແຫ່ງປະເທດຈີນ (ໄທ) ຈຳກັດມະຫາຊົນ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 8,266 | 2,220 |
| ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | - | 163,245 |
| ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 63 | 63 |
| ທະນາຄານແຫ່ງປະເທດຈີນ, ສາຂາແຟັງເຟີດ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 792 | - |

## 25. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວສຳຄັນກັບບັນດາພາກສ່ວນທີ່ກ່ຽວຂ້ອງໃນໄລຍະ ມີດັ່ງລຸ່ມນີ້:

| | *2019*<br>*ລ້ານກີບ* | *2018*<br>*ລ້ານກີບ* |
|---|---|---|
| ເພີ່ມຂຶ້ນ/(ຫຼຸດລົງ)ສຸດທິຂອງເງິນຝາກຢູ່ທະນາຄານແຫ່ງປະເທດຈີນ ສາຂາອື່ນ: | | |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | (134,091) | 166,931 |
| - ເງິນຝາກປະຈຳຢູ່ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | - | (331,720) |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດດິ້ງ | (72,439) | 105,705 |
| - ເງິນຝາກປະຈຳຢູ່ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດດິ້ງ | 404,500 | 217,440 |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | 63,160 | 18,446 |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ (ໄທ) ຈຳກັດມະຫາຊົນ | 6,046 | (5,140) |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ, ສາຂານົ້ວຢອກ | (163,245) | (66,288) |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ, ສາຂາແຟັງເຟີດ | 792 | - |
| (ເພີ່ມຂຶ້ນ) ຂອງການກູ້ຢືມຈາກທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | (177,220) | - |
| (ເພີ່ມຂຶ້ນ) ຂອງຄ້າງຈ່າຍອື່ນໆໃຫ້ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | (23,758) | (138) |
| ເພີ່ມຂຶ້ນ ຂອງເງິນກູ້ໃຫ້ແກ່ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | 177,800 | - |
| ລາຍຮັບດອກເບ້ຍສຳລັບເງິນຝາກກັບທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດດິ້ງ | 17,688 | 18,662 |
| ລາຍຮັບດອກເບ້ຍສຳລັບສິນເຊື່ອຈາກທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | 4,493 | - |
| ລາຍຈ່າຍດອກເບ້ຍສຳລັບການກູ້ຢືມຈາກທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | (8,495) | - |

***ການເຄື່ອນໄຫວກ່ຽວກັບບຸກຄະລາກອນທີ່ສຳຄັນຂອງສາຂາ***

ຜົນຕອບແທນຕໍ່ຄະນະບໍລິຫານມີດັ່ງນີ້ :

| | *2019*<br>*ລ້ານກີບ* | *2018*<br>*ລ້ານກີບ* |
|---|---|---|
| ເງິນເດືອນ ແລະ ເງິນໂບນັດ | 3,353 | 2,805 |
| | **3,353** | **2,805** |

**26. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະການເງິນ**

ບໍ່ມີເຫດການ ຫຼື ສະຖານະການໃດເກີດຂຶ້ນຕັ້ງແຕ່ວັນທີ 31 ທັນວາ 2019 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງສາຂາ.

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ
ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2020